ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ທຫລ ແລະ ທຫທ ແລກປ່ຽນບົດຮຽນກ່ຽວກັບ ການຄຸ້ມຄອງເງິນຕາຕ່າງປະເທດ



ໃນຕອນເຊົ້າຂອງວັນທີ 14 ມິຖຸນາ 2019 ນີ້ ທະນາຄານແຫ່ງ ສປປ ລາວ (ທຫລ) ແລະ ທະນາຄານແຫ່ງປະເທດໄທ (ທຫທ) ໄດ້ຈັດສຳມະນາແລກປ່ຽນບົດຮຽນກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດໂດຍການເຂົ້າຮ່ວມຂອງທ່ານນາງ ວິນຄຳ ລຸນທອນ ຮອງຫົວໜ້າກົມນະໂຍບາຍເງິນຕາ, ທຫລ ແລະ ທ່ານນາງ ດາລານີ ແຊຈູ ຜູ້ອຳນວຍການອາວຸໂສຈາກທະນາຄານແຫ່ງປະເທດໄທເຊິ່ງມີວິຊາການຈາກບັນດາກົມພາຍໃນ ທຫລ ເຂົ້າຮ່ວມ.

ວຽກງານການຄຸ້ມຄອງເງິນຕາຕ່າງປະເທດ ເປັນວຽກງານທີ່ສຳຄັນຕໍ່ການດຳເນີນທຸລະກຳການເງິນລະຫວ່າງປະເທດ, ເປັນວຽກງານທີ່ພົວພັນກັບການຄ້າ ແລະ ການລົງທຶນ ໂດຍວຽກດັ່ງກ່າວ ໃນການຈັດຕັ້ງປະຕິບັດພາລະບົດບາດຂອງທະນາຄານກາງ ຂອງແຕ່ລະປະເທດ ທີ່ດຳເນີນການຄຸ້ມຄອງ ແລະ ຕິດຕາມກວດກາຢ່າງໃກ້ຊິດ ເພື່ອຮັກສາສະຖຽນລະພາບທາງດ້ານເງິນຕາ ໃນລະບົບເສດຖະກິດ ເຊິ່ງ ສປປ ລາວ ເປັນປະເທດທີ່ໄດ້ມີການຮ່ວມມືທາງດ້ານການຄ້າ ແລະ ການລົງທຶນກັບຕ່າງປະເທດ ໂດຍສະເພາະ ລາຊະອານາຈັກໄທ ເຮັດໃຫ້ເງິນຕາຕ່າງປະເທດມີບົດບາດໃນລະບົບເສດຖະກິດ ສປປ ລາວ, ປັດຈຸບັນ ສປປ ລາວ ໄດ້ ດຳເນີນການຄຸ້ມຄອງເງິນຕາຕ່າງປະເທດ ໂດຍອີງຕາມກົດໝາຍ ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ເພື່ອຄຸ້ມຄອງ, ຕິດຕາມກວດກາທຸລະກິດ ແລະ ທຸລະກຳເງິນຕາຕ່າງປະເທດໃຫ້ມີປະສິດທິພາບ ແລະ ຖືກຕ້ອງ ແນໃສ່ຍົກສູງຄຸນຄ່າ ແລະ ສະຖຽນລະພາບຂອງເງິນຕາແຫ່ງຊາດ ແລະ ເຮັດໃຫ້ເກີດຄວາມສົມດູນລະຫວ່າງຄວາມຕ້ອງການເງິນກີບ ແລະ ເງິນຕາຕ່າງປະເທດໃນສັງຄົມ.

 




ເຖິງຢ່າງໃດກໍ່ຕາມ, ການຄຸ້ມຄອງເງິນຕາຕ່າງປະເທດໃນໄລຍະຜ່ານມາ ຍັງມີບາງດ້ານທີ່ບໍ່ສາມາດປະຕິບັດໄດ້ຢ່າງຄ່ອງຕົວ ແລະ ການສຳມະນາຄັ້ງນີ້ ຖືເປັນໂອກາດທີ່ດີ ທີ່ເປັນການສ້າງຄວາມຮັບຮູ້ ແລະ ຄວາມເຂົ້າໃຈໃນວຽກງານການຄຸ້ມຄອງເງິນຕາ ແລະ ເພື່ອເປັນການແລກປ່ຽນບົດຮຽນ ແລະ ປະສົບການຕົວຈິງຂອງທັງສອງປະເທດ ແລະ ນຳໄປເປັນບົດຮຽນ ເພື່ອສຶກສາຄົ້ນຄວ້າ ແລະໝູນໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານຕົວຈິງຂອງ ທຫລ.

**# ຂ່າວ-ພາບ: ສົມອົກ ເຄນຄຳແພງ**